# ການຮ່ວມມື ເພື່ອການພັດທະນາ (ການເຂົ້າຮ່ວມກຽນຕິດຕາມ ປະສິດທິຜົນການຮ່ວມມື ເພື່ອການພັດທະນາ ໃນລະດັບສາກົນ ຄັ້ງທີ IV ຂອງ ສປປ ລາວ ແລະ ຄຳແນະນຳ ກ່ຽວກັບຂະບວນການໂຕະມົນ)


ນຳສະເໜີໂດຍ

ທ່ານ ນາງ ພອນວັນ ອຸທະວົງ

ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ


ກອງປະຊຸມໂຕະມົນປະຈຳປີ 2023

13 ກຸມພາ 2024

# ເນື້ອໃນບົດນຳສະເໜີ

## I. ການເຂົ້າຮ່ວມ ການຕິດຕາມປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ໃນລະດັບສາກົນ ຄັ້ງທີ IV

1.1. ຄວາມເປັນມາ

1.2. ຈຸດປະສົງ

1.3. ຂັ້ນຕອນການຕິດຕາມ

1.4. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ

1.5. ທິດທາງໃນຕໍ່ໜ້າ

## II. ຄຳແນະນຳ ກ່ຽວກັບຂະບວນການໂຕະມົນ

2.1. ຄວາມເປັນມາ ກ່ຽວກັບຂະບວນການໂຕະມົນ

2.2. ຈຸດປະສົງ

2.3. ໂຄງສ້າງຂະບວນການໂຕະມົນ (ກອງປະຊຸມໂຕະມົນ ແລະໜ່ວຍງານຂະແໜງການ)

2.4. ກອບໜ້າວຽກຂອງໜ່ວຍງານຂະແໜງການ

2.5. ການຕິດຕາມ ແລະ ປະເມີນຜົນ

# I. ການເຂົ້າຮ່ວມ ການຕິດຕາມປະສິດທິຜົນຂອງການຮ່ວມມື ເພື່ອການພັດທະນາ ໃນລະດັບສາກົນ ຄັ້ງທີ IV

# 1.1 ຄວາມເປັນມາ

- ການຕິດຕາມປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ໃນລະດັບສາກົນ (GPEDC) ສ້າງຕັ້ງໃນປີ 2011 ໂດຍມີ 163 ປະເທດເຂົ້າຮ່ວມທີ່ ບູຊານ, ສ. ເກົາຫຼີ ເພື່ອເພີ່ມທະວີປະສິດທິຜົນຂອງການພັດທະນາ ແລະ ປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍ SDGs ໂດຍຕິດຕາມປະສິດທິຜົນຂອງການຈັດຕັ້ງປະຕິບັດ ບັນດາຄຳໝາຍໝັ້ນ ການຮ່ວມມືເພື່ອການພັດທະນາ.
- ນັບແຕ່ປີ 2011 ເປັນຕົ້ນມາ ການຈັດຕັ້ງປະຕິດຕາມ GPEDC ໄດ້ດຳເນີນ ເປັນຮອບວຽນທີ 4 , ສຳລັບ ສປປລາວ ໄດ້ເຂົ້າຮ່ວມໃນຮອບທີ II ປີ 2016, ຮອບທີ III ປີ 2018 ແລະ ຮອບທີ IV ປີ 2023).
- ການຕິດຕາມປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ GPEDC ໄດ້ຮັບການຈັດຕັ້ງປະຕິບັດ ບົນພື້ນ ຖານສີ່ຫຼັກການຄື: 1. ຄວາມເປັນເຈົ້າການຂອງປະເທດ; 2. ການສຸມໃສ່ຜົນໄດ້ຮັບ; 3. ການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ 4. ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຮ່ວມກັນ.
- ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ເຮັດໜ້າທີ່ເປັນຜູ້ປະສານງານລະດັບຊາດ ສຳລັບການຕິດຕາມປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ GPEDC.

# 1.2 ຈຸດປະສົງຂອງການເຂົ້າຮ່ວມການຕິດຕາມ GPECC ຄັ້ງທີ IV



ຍົກສູງປະສິດທິພາບຂອງກົນໄກ ການປະສານງານດ້ານການຮ່ວມມື ເພື່ອພັດທະນາ




ເປັນການຕິດຕາມຄວາມຄືບໜ້າໃນ ການຈັດຕັ້ງປະຕິບັດໜ້າວຽກຕ່າງໆ ກ່ຽວກັບການຮ່ວມມືເພື່ອການ ພັດທະນາ ຢູ່ ສປປລາວ ໂດຍໃຫ້ສອດ ຄ່ອງກັບຖະແຫລງການວຽງຈັນວ່າ ດ້ວຍການເປັນຄູ່ຮ່ວມເພື່ອປະສິດທິ ຜົນການຮ່ວມມືເພື່ອການພັດທະນາ



ເປັນການຮຽນຮູ້, ແລກປ່ຽນ ບົດຮຽນແລະປະສົບການນຳ ບັນດາປະເທດໃນພາກພື້ນ ແລະ ສາກົນ

# 1.3 ຂັ້ນຕອນການຕິດຕາມ GPEDC ຄັ້ງທີ IV

**2023-2026**




***ໝາຍເຫດ***: ຂັ້ນຕອນການຕິດຕາມ ແລະ ຂອບເວລາ ສຳລັບ ສປປ ລາວ ໄດ້ກຳນົດໄວ້ ໃນຮ່າງແຜນວຽກລວມຂອງ GPEDC ຢູ່ ສປປ ລາວ.

# 1.4 ຄວາມຄືບໜ້າຂອງການຕິດຕາມ GPEDC ຄັ້ງທີ IV

**ການຕິດຕາມ GPEDC ຢູ່ ສປປ ລາວ**

ພະຈິກ 2023

ທັນວາ 2021

**ໄດ້ຈັດ ກອງປະຊຸມ ຄັ້ງທີ 1 ກັບກະຊວງ ຂະແໜງການ ແລະ ຄັ້ງທີ 2 ກັບ ກະຊວງ ຂະແໜງການ, ຄູ່ຮ່ວມພັດທະນາ, INGOs ແລະພາກເອກະຊົນ**

**ໄດ້ກຳນົດຂອບເຂດ ຂອງການຕິດຕາມ GPEDC**

ມັງກອນ 2024

ມັງກອນ 2024

**ໄດ້ຮ່າງແຜນວຽກລວມ ຂອງການຕິດຕາມ GPEDC ຢູ່ ສປປ ລາວ**

# 1.5 ແຜນວຽກຂອງການຕິດຕາມ GPEDC ໃນຕໍ່ໜ້າ

- ໃນເດືອນ ກຸມພາ 2024, ສືບຕໍ່ປະສານສົມທົບກັບພາກ ສ່ວນກ່ຽວຂ້ອງ ໂດຍສະເພາະຄູ່ຮ່ວມພັດທະນາ ເພື່ອແຕ່ງຕັ້ງຈຸດປະສານງານ.
- ຈັດກອງປະຊຸມລະດັບສູງເພື່ອລິເລີ່ມວຽກງານ GPEDC ຢູ່ ສປປ ລາວ.
- ການເກັບກຳຂໍ້ມູນ: ກຸມພາ ຫາ ເມສາ 2024.
- ການທົບທວນຂໍ້ມູນ ແລະ ການສົ່ງຂໍ້ມູນ: ພຶດສະພາ ຫາ ມິຖຸນາ 2024.
- ການເຜີຍແຜ່ຜົນການຕິດຕາມ: ກໍລະກົດ ຫາ ກັນຍາ 2024.
- ການຜັນຂະຫຍາຍຜົນຂອງການຕິດຕາມ ເຂົ້າໃນແຜນດຳເນີນງານ: ຕຸລາ 2024 ຫາ ການຕິດຕາມຮອບຕໍ່ໄປ (2026).

# II. ຄຳແນະນຳ ກ່ຽວກັບຂະບວນການໂຕະມົນ

# 2.1 ຄວາມເປັນມາ ກ່ຽວກັບຂະບວນການໂຕະມົນ

**ຂະບວນການໂຕະມົນ**

- ຂະບວນການໂຕະມົນ ແມ່ນກົນໄກລະດັບຊາດ ພາຍໃຕ້ການຊີ້ນໍາຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ;
- ກອງປະຊຸມປິ່ນອ້ອມ ເພື່ອສະໜັບສະໜູນໃນການຈັດຕັ້ງປະຕິບັດກອງປະຊຸມໂຕະມົນປະຈໍາປີ ແລະ ກອງປະຊຸມໂຕະມົນລະດັບສູງ ທຸກໆ 5 ປີ;
- ຈຸດປະສົງຂອງປຶ້ມແນະນໍາຂະບວນການໂຕະມົນ ແມ່ນເພື່ອສະໜອງຂໍ້ມູນ ແລະ ເປັນບ່ອນອີງສໍາລັບການຈັດຕັ້ງປະຕິບັດຂະບວນການໂຕະມົນ.
- ເພື່ອຮັບປະກັນການຈັດຕັ້ງປະຕິບັດຂະບວນການໂຕະມົນໃຫ້ມີປະສິດທິພາບ, ກົນໄກດັ່ງກ່າວຕ້ອງມີການພັດທະນາ ແລະ ປັບປຸງຢ່າງຕໍ່ເນື່ອງ;
- 10 ໜ່ວຍງານຂະແໜງການ (SWGs) ມີໜ້າທີ່ເປັນເວທີປຶກສາຫາລື ແລະ ປະສານງານກ່ຽວກັບຫົວຂໍ້ການພັດທະນາໃນ ສປປ ລາວ;

# 2.2 ຈຸດປະສົງ

ປັບປຸງກົນໄກການປະສານງານ ພາຍໃນໜ່ວຍງານຂະແໜງການ, ພາກສ່ວນທີ່ກ່ຽວຂ້ອງ ແລະ ກອງເລຂາຂະບວນການໂຕະມົນ ເພື່ອ:

- ຍົກສູງປະສິດທິພາບ ແລະ ປະສິດທິຜົນ
- ຊຸກຍູ້ໃຫ້ໜ່ວຍງານຂະແໜງການສາມາດຈັດຕັ້ງປະຕິບັດກົນໄກການປະສານງານ
- ເປັນທິດທາງໃຫ້ແກ່ບັນດາໜ່ວຍງານຂະແໜງການ ປຶກສາຫາລື ແກ້ໄຂບັນຫາປິ່ນອ້ອມ
- ສະໜັບໜູນໃຫ້ວຽກງານ ບັນດາໜ່ວຍງານຂະແໜງການໃຫ້ສອດຄ່ອງ, ກົມກຽວ ແລະປະກອບສ່ວນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ

# 2.3. ໂຄງສ້າງຂະບວນການໂຕະມົນ (ກອງປະຊຸມໂຕະມົນ ແລະ ໜ່ວຍງານຂະແໜງການ)

ນຳສະເໜີແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ແຕ່ລະໄລຍະ
ກອງປະຊຸມໂຕະມົນລະດັບສູງ ກ່າວເປີດໂດຍ: ພະນະທ່ານ ນາຍົກລັດຖະມົນຕີ ແລະ ເປັນປະທານໂດຍທ່ານຮອງນາຍົກລັດຖະມົນຕີ

ກອງປະຊຸມ

ໂຕະມົນລະດັບສູງ

ນຳສະເໜີຄວາມຄືບໜ້າການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດປະຈຳປີ
ກອງປະຊຸມໂຕະມົນປະຈຳປີ ກ່າວເປີດໂດຍທ່ານລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ

ກອງປະຊຸມໂຕະມົນປະຈຳປີ

ປະທານ ແລະ ປະທານຮ່ວມປຶກສາຫາລືບູລິມະສິດການພັດທະນາພາຍໃນຂະແໜງການກ່ຽວຂ້ອງ



# 2.4 ຂອບໜ້າວຽກຂອງໜ່ວຍງານຂະແໜງການ

## 1. ການເປັນປະທານ ແລະ ປະທານຮ່ວມ:

- ທ່ານລັດຖະມົນຕີ/ທ່ານຮອງລັດຖະມົນຕີຂອງ 10 ໜ່ວຍງານຂະແໜງການ ເປັນປະທານ
- ທ່ານເອກອັກຄະລັດຖະທູດ/ຫົວໜ້າອົງການຈັດຕັ້ງສາກົນຂອງ 10 ໜ່ວຍງານຂະແໜງການ ເປັນປະທານຮ່ວມ;

## 2. ກອງເລຂາ ໜ່ວຍງານຂະແໜງການ:

- ປະກອບດ້ວຍຜູ້ຕາງຫນ້າຈາກອົງການຈັດຕັ້ງຂອງປະທານ ແລະ ປະທານຮ່ວມ, ປະສານງານ ລະຫວ່າງ ພາກສ່ວນກ່ຽວຂ້ອງໃນໜ່ວຍງານ ເພື່ອປະຕິບັດໜ້າທີ່ ຕາມທີ່ໄດ້ລະບຸໄວ້ໃນກອບໜ້າວຽກ.

# 2.4 ຂອບໜ້າວຽກຂອງໜ່ວຍງານຂະແໜງການ (ຕໍ່)

## 3. ແຜນວຽກປະຈຳປີ ຂອງໜ່ວຍງານຂະແໜງການ:

- ໜ່ວຍງານຂະແໜງການ ຄວນກະກຽມ ແລະ ສົ່ງແຜນວຽກ ໜ່ວຍງານຂະແໜງການ ປະຈຳປີ ໃຫ້ກອງເລຂາຂະບວນການໂຕະມົນ;
- ໜ່ວຍງານຂະແໜງການ ຕ້ອງປັບປຸງແຜນວຽກ ປະຈຳປີຂອງຕົນໃນກາງປີ ແລະສົ່ງແຜນວຽກ ປະຈຳປີສະບັບປັບປຸງ ໃຫ້ກອງເລຂາຂະບວນການໂຕະມົນ.

## 4. ໄລຍະເວລາໃນການຈັດກອງປະຊຸມ:

- ກອງປະຊຸມໜ່ວຍງານຂະແໜງການ (ລະດັບວິຊາການ) ຄວນຈັດເປັນປະຈຳໄຕມາດ ແລະ ກອງປະຊຸມປະຈຳປີ (ລະດັບລັດຖະມົນຕີ) ຄວນຈັດຢ່າງໜ້ອຍ 1 ຄັ້ງ/ປີ ແລະ ຜົນຂອງກອງປະຊຸມດັ່ງກ່າວຈະປະກອບເຂົ້າໃນການກະກຽມທາງດ້ານເນື້ອໃນຂອງ ກອງປະຊຸມໂຕະມົນ.

# 2.5. ການຕິດຕາມ ແລະ ປະເມີນຜົນ

- ກອງເລຂາຂະບວນການໂຕະມົນ (ກົມຮ່ວມມືສາກົນ ກະຊວງແຜນການ ແລະການລົງທຶນ) ຈະຈັດກອງປະຊຸມປຶກສາຫາລື ກັບກອງເລຂາ 10 ໜ່ວຍງານຂະແໜງການ ປະຈຳໄຕມາດ ເພື່ອຕິດຕາມ ການຈັດຕັ້ງປະຕິບັດແຜນວຽກປະຈຳປີ ແລະ ສັງລວມບົດລາຍງານຂອງໜ່ວຍງານຂະແໜງການ ເພື່ອນຳສະເໜີໃນກອງປະຊຸມປະຈຳປີ.

# ຂອບໃຈ